ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 27 ຫາ 31 ມັງກອນ 2025




ກອງປະຊຸມທາບທາມ ຮ່າງ ກົດໝາຍວ່າດ້ວຍການປູກຝັງ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ກອງປະຊຸມທາບທາມ ຮ່າງ ກົດໝາຍວ່າດ້ວຍ ການປູກຝັງ

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ໃນລະຫວ່າງວັນທີ 23-24 ມັງກອນ 2025 ທີ່ ໂຮງແຮມເອັສບູຕິກ,ເມືອງວັງວຽງແຂວງວຽງຈັນໄດ້ ມີກອງປະຊຸມທາບທາມຮ່າງກົດຫມາຍວ່າດ້ວຍການ ປູກຝັງ ປະຈຳພາກກາງຂຶ້ນ ໂດຍການເປັນປະທານ ຂອງທ່ານ ກິແກ້ວ ສິງນາວົງ ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເຂົ້າຮ່ວມມີ ທ່ານ ນາງ ມາຕິນ ເທີເຣີ ຜູ້ຕາງໜ້າອົງການ ສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປລາວ; ປະທານ, ຮອງປະທານສະມາຊິກສະພາ ປະຈຳເຂດເລືອກຕັ້ງ ຈາກ ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ແຂວງ ໄຊສົມບູນ, ແຂວງບໍລິຄຳໄຊ ແລະ ແຂວງຄຳມ່ວນ; ຮອງຫົວຫນ້າຫ້ອງການ, ຫົວໜ້າກົມ, ຮອງຫົວໜ້າ ກົມ ຈາກສູນກາງ;ຫົວໜ້າຮອງຫົວໜ້າ ພະແນກ ກະສິກຳ ແລະ ປ່າໄມ້ ແລະ ບັນດາທ່ານຜູ້ຕາງໜ້າ ພະແນກການ ຈາກ 4 ແຂວງ ແລະ ນະຄອນຫຼວງ ວຽງຈັນເຂົ້າຮ່ວມ ທັງໝົດ 91 ທ່ານ ຍິງ 22 ທ່ານ.

ໃນກອງປະຊຸມ ທ່ານ ບຸນຈັນ ກົມບຸນຍະສິດ ຫົວຫນ້າກົມປູກຝັງ ກະຊວງກະສິກຳແລະປ່າໄມ້ ໄດ້ລາຍງານໃຫ້ຮູ້ກ່ຽວກັບຄວາມເປັນມາຄວາມຈຳ ເປັນແລະເຫດຜົນໃນການຮ່າງກົດຫມາຍປູກຝັງ ໃຫ້ຮູ້ວ່າ: ໃນໄລຍະຜ່ານມາພວກເຮົາມີກົດໝາຍ ວ່າດ້ວຍກະສິກຳ ເປັນກົດໝາຍ ສະບັບທຳອິດ ທີ່ ຂະແໜງການກະສິກຳ ແລະ ປ່າໄມ້ ໄດ້ນຳໃຊ້ມາ ແຕ່ປີ 1998 ຊຶ່ງມາຮອດປະຈຸບັນ ແມ່ນຜ່ານມາ ແລ້ວ 26 ປີ, ໃນການຈັດຕັ້ງປະຕິບັດຜ່ານມາ ເຫັນ ວ່າກົດໝາຍດັ່ງກ່າວ ໄດ້ເປັນເຄື່ອງມືມະຫາພາກ ທີ່ສຳຄັນ ໃນການຄຸ້ມຄອງວຽກງານຕ່າງໆຕາມ ພາລະບົດບາດ ເປັນຕົ້ນ ວຽກງານ ການປູກຝັງ,








ການລ້ຽງສັດ, ຊົນລະປະທານ, ປັດໄຈການຜະລິດ, ເຄື່ອງມື-ກົນຈັກ, ການປຸງແຕ່ງກະສິກຳ ລວມທັງ ການປົກປັກຮັກສາສິ່ງແວດລ້ອມ ພ້ອມດຽວກັນນັ້ນ, ກົດໝາຍກະສິກຳ ຍັງເປັນພື້ນຖານທາງດ້ານນິຕິກຳ ໃນການຜັນຂະຫຍາຍເປັນກົດ ໝາຍສະເພາະ ຊຶ່ງໄລຍະຜ່ານມາກະຊວງກະສິກຳແລະປ່າໄມ້ ກໍ່ໄດ້ຜັນຂະຫຍາຍມາເປັນກົດໝາຍສະເພາະຫຼາຍສະບັບ ເປັນຕົ້ນ ກົດໝາຍ ວ່າດ້ວຍ ການປ້ອງກັນ ແລະ ກັກກັນພືດ, ກົດໝາຍລ້ຽງສັດ ແລະ ສັດຕະວະແພດກົດໝາຍວ່າດ້ວຍຊົນລະປະທານ, ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ ແລະ ຍັງມີນິຕິກຳລຸ່ມກົດໝາຍອີກຫຼາຍສະບັບ. ນອກນີ້, ຍັງເປັນພື້ນຖານໃນການສ້າງ ຍຸດທະສາດ ການພັດທະນາກະສິກຳ ເຖິງປີ 2025 ແລະ ວິໄສທັດເຖິງປີ 2030 ທີ່ເປັນເຄື່ອງມືທີ່ສຳຄັນ ໃນການຄຸ້ມຄອງ ແລະ ພັດທະນາ ຂະແໜງການກະສິກຳ ແລະ ປ່າໄມ້ ໃຫ້ສາມາດຮັບປະກັນໃນການຜະລິດສະບຽງອາຫານຮັບໃຊ້ສັງຄົມ, ຜະລິດວັດຖຸດິບປ້ອນໂຮງງານປຸງແຕ່ງ ລວມທັງຜະລິດເປັນສິນຄ້າ ຊົມໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ. ເນື່ອງຈາກ ກົດໝາຍກະສິກຳ ໄດ້ນຳໃຊ້ເປັນເວລາດົນນານແລ້ວ, ໂຄງປະກອບ ແລະ ເນື້ອໃນ ກໍ່ບໍ່ສອດຄ່ອງກັບ ການສ້າງນິຕິກຳ ໃນປະຈຸບັນ ແລະ ໄດ້ມີການຜັນຂະຫຍາຍອອກມາເປັນຫຼາຍກົດໝາຍຍ່ອຍ ເພື່ອຄຸ້ມຄອງວຽກງານສະເພາະດ້ານແລ້ວ. ສະນັ້ນ, ຈຶ່ງຈຳເປັນຕ້ອງໄດ້ປັບປຸງກົດໝາຍກະສິກຳສະບັບນີ້ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງໃນປະຈຸບັນ ໂດຍມີເປົ້າໝາຍແມ່ນ ເພື່ອກຳນົດຄືນ ກ່ຽວກັບ ໂຄງປະກອບ-ເນື້ອ

ໃນ ຂອງຮ່າງກົດໝາຍ ລວມທັງ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ພັດທະນາ ວຽກງານປູກຝັງ ໃຫ້ເປັນລະບົບຄົບຊຸດ ຮັບປະກັນການປູກຝັງ ໃຫ້ມີຄວາມຍືນຍົງ, ຮັບປະກັນສະບຽງອາຫານໃຫ້ພຽງພໍ, ສະອາດ, ປອດໄພຕໍ່ສຸຂະພາບຂອງຜູ້ບໍລິໂພກ ແລະ ຜູ້ຜະລິດ ແນໃສ່ ສ້າງເງື່ອນໄຂໃຫ້ແກ່ ການຜະລິດເປັນສິນຄ້າ, ການຫັນເປັນອຸດສາຫະກຳປຸງແຕ່ງກະສິກຳ ທີ່ທັນສະໄໝ ຕາມທິດສະອາດ, ສີຂຽວ ແລະ ຍືນຍົງ, ປະກອບສ່ວນ ພັດທະນາປະເທດຊາດ ໃຫ້ຮັ່ງມີ ແລະ ລຶບລ້າງຄວາມທຸກຍາກ ຂອງປະຊາຊົນບັນດາເຜົ່າ, ໂດຍຮ່າງກົດຫມາຍ ປູກຝັງທີ່ໄດ້ຮັບການທາບທາມໃນກອງປະຊຸມຄັ້ງນີ້ແມ່ນມີ ທັງຫມົດ 10ພາກ,9ຫມວດ 104ມາດຕາ. ໃນກອງປະຊຸມຄັ້ງນີ້ແມ່ນໄດ້ເປີດກວ້າງໃຫ້ບັນດາຜູ້ເຂົ້າຮ່ວມໄດ້ພ້ອມກັນແລກປ່ຽນແລະປະກອບຄຳຄິດຄຳເຫັນທັງຂໍ້ສະເຫນີຕ່າງໆເພື່ອຮ່ວມກັນຊ່ວຍໃຫ້ຮ່າງກົດຫມາຍດັ່ງກ່າວນີ້ ມີຄວາມແທດເຫມາະມີຄວາມສອດຄ່ອງ ແລະເນື້ອໃນສົມບູນຂຶ້ນຕື່ມ.




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;